**ມາດຕາ 18. ມາດຕະການ**

ໃນການປະຕິບັດໜ້າທີ່ວຽກງານ ຄະນະໄກ່ເກ່ຍຜູ້ໃດຫາກໄດ້ສວຍໃຊ້ໜ້າທີ່ຂອງຕົນເພື່ອຫາຜົນປະໂຫຍດສ່ວນຕົວ, ເຄື່ອນໄຫວບໍ່ຖືກຕ້ອງຕາມຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ເຊັ່ນ: ມາດຕະການສຶກສາອົບຮົມ, ທາງບໍລິຫານ ຫຼືທາງອາຍາຕາມແຕ່ກໍລະນີເບົາ ຫຼືໜັກ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ໃຫ້ກົມຄຸ້ມຄອງລະບົບຍຸຕິທຳ, ກົມຈັດຕັ້ງ-ພະນັກງານ, ຫ້ອງການ ກະຊວງຍຸຕິທຳ, ພະແນກຍຸຕິທຳນະຄອນຫຼວງ, ແຂວງ, ອົງການປົກຄອງທ້ອງຖິ່ນ, ຫ້ອງການຍຸຕິທຳເມືອງ, ກຸ່ມບ້ານ, ບ້ານ ແລະພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດ ແລະໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

**ມາດຕາ 20. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນຂໍ້ຕົກລົງສະບັບເລກທີ 02/ກຍ, ລົງວັນທີ 19 ມີນາ 2007 ວ່າດ້ວຍການສ້າງຕັ້ງ ແລະການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

ລັດຖະມົນຕີວ່າການ

ກະຊວງຍຸຕິທຳ

ລັດຖະມົນຕີ

ດຣ. ຈະເລີນ ເຢຍປາວເຮີ